# ສິດ ແລະ ການປົກປ້ອງທ່ານຕໍ່ກັບໃບບິນຄ່າປິ່ນປົວສຸຂະພາບທີ່ຄາດບໍ່ເຖິງ

*ເມື່ອທ່ານໄດ້ຮັບການປິ່ນປົວສຸກເສີນ ຫຼື ໄດ້ຮັບການປິ່ນປົວຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ ຢູ່ໂຮງໝໍໃນເຄືອຄ່າຍ ຫຼື ສູນຜ່າຕັດເຄື່ອນທີ່, ທ່ານຈະໄດ້ຮັບການປົກປ້ອງຈາກການໄດ້ຮັບໃບບິນທີ່ຄາດທີ່ບໍ່ເຖິງ ຫຼື ການແຈ້ງຍອດລວມໃບບິນ.*

### "ການແຈ້ງຍອດລວມໃບບິນ" (ບາງຄັ້ງເອີ້ນວ່າ "ໃບບິນທີ່ຄາດບໍ່ເຖິງ") ແມ່ນຫຍັງ?

ເມື່ອທ່ານໄປພົບທ່ານໝໍ ຫຼື ຜູ້ໃຫ້ບໍລິການປິ່ນປົວສຸຂະພາບອື່ນ, ທ່ານອາດຈະໄດ້ຕິດໜີ້ຄ່າໃຊ້ຈ່າຍທີ່ເກີນວົງເງິນ, ເຊັ່ນ: ການຈ່າຍເງິນຮ່ວມ, ການປະກັນໄພຮ່ວມ, ແລະ/ຫຼື ມູນຄ່າຫັກລົບໃດໜຶ່ງ. ທ່ານອາດຈະມີລາຍຈ່າຍອື່ນໆ ຫຼື ຕ້ອງຈ່າຍມູນຄ່າທັງໝົດໃນໃບບິນ ຖ້າທ່ານພົບເຫັນວ່າຜູ້ໃຫ້ບໍລິການ ຫຼື ເຂົ້າໄປສູນບໍລິການດູແລສຸຂະພາບແຫ່ງໃດໜຶ່ງ ທີ່ບໍ່ຢູ່ໃນເຄືອຂ່າຍຂອງແຜນສຸຂະພາບຂອງທ່ານ.

"ຢູ່ນອກລະບົບ" ອະທິບາຍຜູ້ໃຫ້ບໍລິການ ແລະ ສູນໃຫ້ບໍລິການ ທີ່ບໍ່ໄດ້ເຊັນສັນຍາກັບແຜນສຸຂະພາບຂອງທ່ານ. ຜູ້ໃຫ້ບໍລິການນອກເຄືອຂ່າຍ ອາດຈະໄດ້ຮັບອະນຸຍາດໃຫ້ສົ່ງໃບບິນໃຫ້ທ່ານສຳລັບສ່ວນຕ່າງລະຫວ່າງ ສິ່ງທີ່ແຜນຂອງທ່ານເຫັນດີຈ່າຍ ແລະ ຈຳນວນເຕັມ ທີ່ເປັນຄ່າບໍລິການ. ນີ້ເອີ້ນວ່າ **"ການແຈ້ງຍອດລວມໃບບິນ"** ມູນຄ່ານີ້ອາດຈະຫຼາຍກວ່າລາຍຈ່າຍໃນເຄືອຂ່າຍສຳລັບການບໍລິການແບບດຽວກັນ ແລະ ອາດຈະບໍ່ນັບລາຍຈ່າຍທີ່ເກີນວົງເງິນປະຈຳປີທີ່ຈຳກັດຂອງທ່ານ.

"ໃບບິນທີ່ຄາດບໍ່ເຖິງ" ແມ່ນຍອດລວມໃບບິນທີ່ບໍ່ຄາດຄິດ. ນີ້ສາມາດເກີດຂຶ້ນເມື່ອທ່ານບໍ່ສາມາດຄວບຄຸມຜູ້ທີ່ກ່ຽວພັນກັບການດູແລຂອງທ່ານ — ເຊັ່ນ ເມື່ອທ່ານມີເຫດສຸກເສີນ ຫຼື ເມື່ອທ່ານມີຕາລາງນັດໝາຍເຂົ້າໄປຫາສູນບໍລິການໃນເຄືອຂ່າຍ ແຕ່ວ່າມີການປິ່ນປົວທີ່ບໍ່ຄາດຄິດເກີດຂຶ້ນຍ້ອນຜູ້ໃຫ້ບໍລິການປິ່ນປົວນອກເຄືອຂ່າຍ.

### ທ່ານຈະໄດ້ຮັບການປົກປ້ອງຈາກການແຈ້ງຍອດລວມໃບບິນສຳລັບ:

#### ການບໍລິການສຸກເສີນ

ຖ້າທ່ານມີເງື່ອນໄຂການປິ່ນປົວສຸຂະພາບສຸກເສີນ ແລະ ໄດ້ຮັບບໍລິການສຸກເສີນ ຈາການອກຜູ້ໃຫ້ບໍລິການ ຫຼື ສູນບໍລິການນອກເຄືອຂ່າຍ, ຜູ້ໃຫ້ບໍລິການ ຫຼື ສູນບໍລິການທຸກແຫ່ງ ອາດຈະສົ່ງໃບບິນຄ່າໃຊ້ຈ່າຍ ໃນຈຳນວນເງິນທີ່ຈ່າຍຮ່ວມກັນໃນເຄືອຂ່າຍຂອງແຜນຂອງທ່ານ (ເຊັ່ນ ລາຍຈ່າຍຮ່ວມ ແລະ ປະກັນໄພຮ່ວມ).

SUMMIT ORTHOPEDICS

ທ່ານບໍ່ສາມາດໄດ້ຮັບການແຈ້ງຍອດລວມໃບບິນສຳລັບການບໍລິການສຸກເສີນເຫຼົ່ານີ້. ນີ້ລວມທັງ ການບໍລິການຕ່າງໆທີ່ທ່ານອາດຈະໄດ້ຮັບຫຼັງຈາກທ່ານຢູ່ໃນສະພາບໝັ້ນຄົງ, ເວັ້ນເສຍແຕ່ວ່າທ່ານໃຫ້ການຍິນຍອມເປັນລາຍລັກອັກສອນ ແລະ ຍົກເລີກການປົກປ້ອງຂອງທ່ານ ຈາກການທີ່ບໍ່ໃຫ້ມີຍອດຄົງຄ້າງທີ່ຢູ່ໃນໃບບິນ ສຳລັບການບໍລິການທີ່ໝັ້ນຄົງ-ພາຍຫຼັງເຫຼົ່ານີ້.

**ການບໍລິການບາງຢ່າງຢູ່ໂຮງໝໍໃນເຄືອຂ່າຍ ຫຼື ສູນຜ່າຕັດເຄື່ອນທີ່**

ເມື່ອທ່ານໄດ້ເຂົ້າຮັບບໍລິການຈາກໂຮງໝໍໃນເຄືອຂ່າຍ ຫຼື ສູນຜ່າຕັດເຄື່ອນທີ່, ຜູ້ສະໜອງຈຳນວນໜຶ່ງເຫຼົ່ານັ້ນອາດຈະຢູ່ນອກເຄືອຄ່າຍ. ໃນກໍລະນີເຫຼົ່ານີ້, ຜູ້ໃຫ້ບໍລິການເຫຼົ່ານັ້ນສ່ວນຫຼາຍແລ້ວອາດຈະສົ່ງໃບບິນຈຳນວນເງິນທີ່ຈ່າຍຮ່ວມໃນເຄືອຂ່າຍ ທີ່ຢູ່ໃນແຜນຂອງທ່ານ. ສິ່ງດັ່ງກ່າວນີ້ ໃຊ້ໃນການປິ່ນປົວສຸຂະພາບແບບສຸກເສີນ, ວາງຢາສະຫຼົບ, ພະຍາດວິທະຍາ, ຣັງສີ, ຫ້ອງທົດລອງ, ເດັກນ້ອຍເກີດໃໝ່, ຜູ້ຊ່ວຍການຜ່າຕັດ, ແພດໝໍ, ຫຼື ການບໍລິການຂອງແພດທີ່ໄດ້ຮັບການອະນຸມັດຈາກຄະນະບໍລິຫານ. ຜູ້ໃຫ້ບໍລິການເຫຼົ່ານີ້ ບໍ່ແຈ້ງຍອດລວມໃບບິນໃຫ້ແກ່ທ່ານ ແລະ ອາດຈະບໍ່ບອກທ່ານໃນໃຫ້ຍົກເລີກການປົກປ້ອງຂອງທ່ານທີ່ຈະບໍ່ໃຫ້ອອກຍອດຄົງຄ້າງທີ່ຢູ່ໃນໃບບິນ.

ຖ້າທ່ານໄດ້ຮັບການບໍລິການອື່ນຢູ່ໃນສູນບໍລິການໃນເຄືອຂ່າຍເຫຼົ່ານີ້, ຜູ້ໃຫ້ບໍລິການນອກເຄືອນຂ່າຍບໍ່ສາມາດອອກການແຈ້ງຍອດລວມໃບບິນໃຫ້ແກ່ທ່ານ, ເວັ້ນເສຍແຕ່ວ່າທ່ານຈະໄດ້ຮັບການຍິນຍອມເປັນລາຍລັກອັກສອນ ແລະ ຍົກເລີກການປົກປ້ອງຂອງທ່ານ.

**ທ່ານບໍ່ເຄີຍຮຽກຮ້ອງໃຫ້ຍົກເລີກການປົກປ້ອງທ່ານຈາກການແຈ້ງຍອດລວມໃນໃບບິນ. ທ່ານຍັງບໍ່ຮຽກຮ້ອງໃຫ້ໄດ້ຮັບການດູແລນອກເຄືອຂ່າຍ. ທ່ານສາມາດເລືອກຜູ້ໃຫ້ບໍລິການ ຫຼື ສູນບໍລິການ ໃນເຄືອຂ່າຍຂອງແຜນຂອງທ່ານ.**

**ເມື່ອການແຈ້ງຍອດລວມໃບບິນບໍ່ໄດ້ຮັບອະນຸຍາດ, ທ່ານຍັງຄົງມີການປົກປ້ອງດັ່ງຕໍ່ໄປນີ້:**

» ທ່ານມີຄວາມຮັບຜິດຊອບພຽງແຕ່ຈ່າຍຄ່າສ່ວນແບ່ງຂອງມູນຄ່າ (ເຊັ່ນ ລາຍຈ່າຍຮ່ວມ, ປະກັນໄພຮ່ວມ, ແລະ ມູນຄ່າທີ່ຫັກອອກ ທີ່ທ່ານຈະຈ່າຍໃຫ້ ຖ້າວ່າຜູ້ໃຫ້ບໍລິການ ຫຼື ສູນບໍລິການບໍ່ຢູ່ໃນເຄືອຂ່າຍ). ແຜນການສຸຂະພາບຂອງທ່ານຈະຈ່າຍໃຫ້ຜູ້ບໍລິການ ແລະ ສູນບໍລິການນອກເຄືອຄ່າຍໂດຍກົງ.

» ແຜນສຸຂະພາບຂອງທ່ານໂດຍທົ່ວໄປແລ້ວຈະຕ້ອງ:

  » ຄຸ້ມຄອງການບໍລິການສຸກເສີນໂດຍບໍ່ຮຽກຮ້ອງໃຫ້ທ່ານຕ້ອງໄດ້ຮັບການອະນຸຍາດຄ່າບໍລິການກ່ອນລວງໜ້າ (ກ່ອນໃຫ້ການອະນຸມັດ).

SUMMIT ORTHOPEDICS

» ຄຸ້ມຄອງການບໍລິການສຸກເສີນໂດຍຜູ້ໃຫ້ບໍລິການນອກເຄືອຂ່າຍ.

» ອີງໃສ່ສິ່ງທີ່ທ່ານເປັນໜີ້ກັບຜູ້ໃຫ້ບໍລິການ ຫຼື ສູນບໍລິການ (ແບ່ງປັນລາຍຈ່າຍ) ອີງຕາມສິ່ງທີ່ທ່ານຈະຈ່າຍຜູ້ໃຫ້ບໍລິການໃນເຄືອຂ່າຍ ຫຼື ສູນບໍລິການ ແລະ ສະແດງໃຫ້ເຫັນມູນຄ່າໃນການອະທິບາຍຜົນປະໂຫຍດຂອງທ່ານ.

» ນັບຈຳນວນເງິນໃດໜຶ່ງທີ່ທ່ານຈ່າຍສຳລັບການບໍລິການສຸກເສີນ ຫຼື ບໍລິການນອກເຄືອຂ່າຍຜ່ານຈຳນວນເງິນທີ່ຫັກ ແລະ ຂີດຈຳກັດຂອງວົງເງິນສ່ວນເກີນ.

ຖ້າທ່ານເຊື່ອວ່າທ່ານໄດ້ຮັບໃບບິນທີ່ບໍ່ຖືກຕ້ອງ, ທ່ານອາດຕິດຕໍ່ຫ້ອງການທຸລະກິດຂອງພວກເຮົາໄດ້ທີ່ (651) 968-5050. ເຂົ້າເບິ່ງwww.cms.gov/nosurprises ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດຂອງທ່ານພາຍໃຕ້ກົດໝາຍຂອງລັດຖະບານກາງ.

ທ່ານຍັງສາມາດເຂົ້າເບິ່ງໄດ້ທີ່ www.ag.state.mn.us/consumer/health/default.asp ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບສິດຂອງທ່ານພາຍໃຕ້ກົດໝາຍຂອງລັດມິນນີໂຊຕ້າ.

SUMMIT ORTHOPEDICS